ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 2661 /ຜ-ຟຟລ.

ນະຄອນຫຼວງວຽງຈັນ, ວັນທີ 28 AUG 2025

ແຈ້ງການ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,

ເລື່ອງ: ແຈ້ງການປ່ຽນແປງຫົວໜ້າພະແນກບັນຊີ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11/12/2024.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງໂຄງຮ່າງການຈັດຕັ້ງ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ສະບັບເລກທີ 048/ຜ-ຟຟລ.ສພບ, ລົງວັນທີ 19/06/2025.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບວ່າ ຜ-ຟຟລ ໄດ້ມີການປັບປຸງໂຄງຮ່າງການຈັດຕັ້ງໃໝ່ ພາຍໃນບໍລິສັດ ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານເປັນໄປຢ່າງຕໍ່ເນື່ອງ ແລະ ສາມາດດຳເນີນການທຸລະກິດເປັນໄປຕາມແຜນທີ່ວາງໄວ້, ຜ-ຟຟລ ໄດ້ປັບປຸງໂຄງຮ່າງການຈັດຕັ້ງຈາກພະແນກບັນຊີ ເປັນຝ່າຍບັນຊີ, ໂດຍມີລາຍລະອຽດດັ່ງນີ້:

1. ແຕ່ງຕັ້ງ **ທ່ານ ຄຳຫວາງ ສີສົມຫວັ້ງ ເປັນຮັກສາການຜູ້ອຳນວຍການຝ່າຍບັນຊີ.**

ດັ່ງນັ້ນ, ຜ-ຟຟລ ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖື,

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸກສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕຸ້ ປ.ນ 2392,ນະຄອນຫຼວງວຽງຈັນ.
ໂທລະສັບ: (856-21) 316142, ແຟັກ: (856-21) 316141,ອີເມລ: edlgenhq@edlgen.com.la; ເວັບໄຊທ໌:www.edlgen.com.la